**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------

ລັດຖະບານ

ເລກທີ 09 /ລບ.

ນະຄອນຫລວງວຽງຈັນ, ວັນທີ 2. 10. 2014

# ມະຕິກອງປະຊຸມ

## ຂອງກອງປະຊຸມລັດຖະບານ ປະຈຳສົກປີ 2013-2014

ກອງປະຊຸມລັດຖະບານ ປະຈຳສົກປີ 2013-2014 ໄດ້ດຳເນີນແຕ່ວັນທີ 22 - 24 ກັນຍາ 2014 ທີ່ຫ້ອງປະຊຸມລັດຖະບານ ພາຍໃຕ້ການເປັນປະທານ ຂອງທ່ານ ທອງສິງ ທຳມະວົງ ນາຍົກລັດຖະມົນຕີ, ໂດຍການເຂົ້າຮ່ວມຂອງບັນດາທ່ານຮອງນາຍົກລັດຖະມົນຕີ, ບັນດາທ່ານສະມາຊິກລັດຖະບານ, ປະທານ-ຫົວໜ້າອົງການຈັດຕັ້ງພັກ, ລັດ, ສະພາແຫ່ງຊາດ, ອົງການຕຸລາການ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ທ່ານເຈົ້າຄອງນະຄອນຫລວງວຽງຈັນ, ບັນດາທ່ານເຈົ້າແຂວງ-ຮອງເຈົ້າແຂວງ ແລະ ແຂກຖືກເຊີນ ລວມທັງໝົດ ຈຳນວນ 94 ທ່ານ. ກອງປະຊຸມໄດ້ຮັບຟັງລາຍງານ, ພິຈາລະນາ ແລະ ຮັບຮອງເອົາບາງບັນຫາສຳຄັນ ດັ່ງນີ້:

I. <u>ກອງປະຊຸມໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ສົກປີ 2013-2014, ການເຜີຍແຜ່ດຳລັດ ສະບັບເລກທີ 328/ລບ, ລົງວັນທີ 17 ກັນຍາ 2014 ວ່າດ້ວຍການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈຳສົກປີ 2014-2015 ແລະ ວຽກງານຕິດພັນຈຳນວນຫນຶ່ງ,</u> ຊຶ່ງລາຍງານໂດຍທ່ານລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ, ທ່ານລັດຖະມົນຕີວ່າການກະຊວງການເງິນ ແລະ ທ່ານຜູ້ວ່າການທະນາຄານ ແຫ່ງ ສປປ ລາວ.

1.1 <u>ກ່ຽວກັບແຜນການພັດທະນາເສດຖະກິດ-ສັງຄົມ.</u>

**1.1.1** ກອງປະຊຸມເຫັນວ່າ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2013-2014, ລວມຍອດຜະລິດຕະພັນພາຍໃນ ປະຕິບັດໄດ້ຕາມຄາດຫມາຍດັດແກ້ 7,6% (ຫລຸດຄາດຫມາຍທີ່ວາງໄວ້), ການລົງທຶນຂອງລັດປະຕິບັດໄດ້ 66% ຂອງແຜນການປີ, ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ມີທ່າອ່ຽງທີ່ດີຂຶ້ນ, ສາມາດດຶງດູດການລົງທຶນໄດ້ 592,6 ລ້ານໂດລາສະຫະລັດ.

**1.1.2 ສຳລັບມາດຕະການຈັດຕັ້ງປະຕິບັດ ຫມົດສົກປີ 2013-2014** ກອງປະຊຸມໄດ້ຊີ້ນຳໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ເອົາໃຈໃສ່ຈັດຕັ້ງປະຕິບັດແຜນດັດແກ້ 6 ເດືອນທ້າຍປີ ຕາມທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວ ໃຫ້ບັນລຸຕົວເລກຄາດຫມາຍທີ່ໄດ້ກຳນົດໄວ້.

**1.1.3 ສຳລັບສົກປີ 2014-2015:** ແມ່ນໃຫ້ສູ້ຊົນບັນລຸຄາດໝາຍດ້ານເສດຖະກິດມະຫາພາກ: ລວມຍອດຜະລິດຕະພັນພາຍໃນ (GDP) ເພີ່ມຂຶ້ນບໍ່ຫລຸດ 7,5 %, ໃນນັ້ນ: ຂະແຫນງກະສິກຳ ກວມເອົາ 27,3%, ຂະແຫນງອຸດສາຫະກຳ ກວມເອົາ 29,1% ແລະ ຂະແຫນງບໍລິການ (ບໍ່ລວມພາສີຂາເຂົ້າ) ກວມເອົາ 39,0%. **ສຳລັບວິທີການ ແລະ ມາດຕະການຈັດຕັ້ງປະຕິບັດ** ແມ່ນໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ເອົາໃຈໃສ່ໃນການເຜີຍແຜ່ເຊື່ອມຊຶມ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມວິທີການ ແລະ ບັນດາມາດຕະການຕ່າງໆ ຕາມທີ່ລະບຸໄວ້ໃນດຳລັດສະບັບເລກທີ 328/ນຍ, ລົງວັນທີ 17 ກັນຍາ 2014 ດ້ວຍຄວາມເປັນເຈົ້າການ ແລະ ຮັບຜິດຊອບສູງ, ພ້ອມກັນນັ້ນ ກໍໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດ ຄຳສັ່ງຂອງນາຍົກລັດຖະມົນຕີ ແລະ ບົດແນະນຳ ຂອງລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ ວ່າດ້ວຍການຄົ້ນຄວ້າວິໄສທັດ ຮອດປີ 2030, ຍຸດ

ທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025), ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ບົດແນະນຳ ຂອງລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 24/ນຍ, ລົງວັນທີ 7 ພຶດສະພາ 2014 ແລະ ສະບັບເລກທີ 2028/ຜທ, ລົງວັນທີ 2 ກັນຍາ 2014 ຕາມລຳດັບ.

1.2 ກ່ຽວກັບແຜນງົບປະມານແຫ່ງລັດ.

**1.2.1 ກອງປະຊຸມສັງເກດເຫັນວ່າ ການຈັດຕັ້ງປະຕິບັດແຜນງົບປະມານ ສົກປີ 2013-2014 ມາເຖິງວັນທີ 16 ກັນຍາ** 2014 ສາມາດຈັດຕັ້ງປະຕິບັດລາຍຮັບໄດ້: 20.939 ຕື້ກີບ ເທົ່າກັບ 86% ທຽບໃສ່ແຜນດັດແກ້, ໃນນັ້ນ ພູດສູນກາງປະຕິບັດໄດ້ 17.303 ຕື້ກີບ ເທົ່າກັບ 87% ແລະ ພູດທ້ອງຖິ່ນປະຕິບັດໄດ້ 3.636 ຕື້ກີບ ເທົ່າກັບ 83%; ດ້ານລາຍຈ່າຍປະຕິບັດໄດ້ 25.428 ຕື້ກີບ ເທົ່າກັບ 86% ທຽບໃສ່ແຜນດັດແກ້, ໃນນີ້ ລາຍຈ່າຍສູນກາງ 19.324 ຕື້ກີບ ເທົ່າກັບ 88% ແລະ ລາຍຈ່າຍທ້ອງຖິ່ນ 6.103 ຕື້ກີບ ເທົ່າກັບ 79%; ໂດຍລວມແລ້ວ ເຫັນວ່າການເກັບລາຍຮັບ ແມ່ນມີຖ່ວງທ່າດີຂຶ້ນ, ໂດຍສະເພາະພາຍຫລັງມີການຈັດຕັ້ງ 7 ໜ່ວຍງານ ເພື່ອຈັດຕັ້ງປະຕິບັດມະຕິ 7 ສະໄໝທີ IX ຂອງພັກ, ຄຳສັ່ງຂອງຄະນະເລຂາທິ ການສູນກາງພັກ ສະບັບເລກທີ 09/ຄລສພ, ລົງວັນທີ 4 ມີນາ 2014 ແລະ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 14/ນຍ , ລົງວັນທີ 7 ກຸມພາ 2014 ວ່າດ້ວຍມາດຕະການຮັກສາສະຖຽນລະພາບ ຂອງເສດຖະກິດມະຫາພາກ ເພື່ອຊຸກຍູ້ຈັງຫວະການເຕີບໂຕຢ່າງຕໍ່ເນື່ອງ ຕາມທິດຍືນຍົງ.

**1.2.2 ສຳລັບມາດຕະການຈັດຕັ້ງປະຕິບັດ ໝົດສົກປີ 2013-2014 :** ກອງປະຊຸມໄດ້ຊີ້ນຳໃຫ້ກະຊວງການເງິນ ສືບຕໍ່ຍົກສູງຄວາມຮັບຜິດຊອບ ໃນການສົມທົບກັບ ບັນດາຂະແໜງການ ແລະ ທ້ອງຖິ່ນ ສືບຕໍ່ເກັບລາຍຮັບ ທີ່ຍັງມີຄວາມສ່ຽງ ທີ່ຈະບໍ່ສາມາດບັນລຸຕາມຄາດໝາຍ ເປັນຕົ້ນ: ຂະແໜງສ່ວຍສາອາກອນ, ຂະແໜງຄຸ້ມຄອງການເງິນຂອງລັດວິສາຫະກິດ ແລະ ຂະແໜງຄຸ້ມຄອງຊັບສິນຂອງລັດ. ສຳລັບລາຍຈ່າຍ ແມ່ນໃຫ້ສືບຕໍ່ປະຕິບັດບູລິມະສິດໃນການເບີກຈ່າຍເງິນເດືອນ, ເງິນອຸດໜູນ, ຈ່າຍຊຳລະໜີ້ສິນຕ່າງປະເທດ, ດຸ່ນດ່ຽງເພີ່ມໃຫ້ທ້ອງຖິ່ນ ແລະ ແກ້ໄຂໜີ້ສິນຄ້າງຈ່າຍ ສົກປີ 2012-2013 ໃຫ້ສຳເລັດໃນສົກປີນີ້ ແລະ ປະຕິບັດແຜນດຸ່ນດ່ຽງ ຈຳນວນ 3.679 ຕື້ກີບ ເພື່ອຮັກສາອັດຕາຂາດດຸນ ບໍ່ໃຫ້ເກີນ 5,8% ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ.

**1.2.3 ການຈັດຕັ້ງແຜນງົບປະມານ ສຳລັບສົກປີ 2014-2015** ແມ່ນໃຫ້ສູ້ຊົນປະຕິບັດລາຍຮັບໃຫ້ໄດ້ທັງໝົດບໍ່ຫລຸດ 25% ຂອງ GDP, ໃນນີ້ ລາຍຮັບພາຍໃນໃຫ້ໄດ້ 20% ຂອງ GDP ຈາກສ່ວຍສາອາກອນ ເພີ່ມຂຶ້ນ 13%, ພາສີ ເພີ່ມຂຶ້ນ 15%, ຄຸ້ມຄອງຊັບສິນຂອງລັດ ເພີ່ມຂຶ້ນ 28% ແລະ ຄຸ້ມຄອງການເງິນລັດວິສາຫະກິດ ເພີ່ມຂຶ້ນ 41% ຈາກຄາດຄະເນປະຕິບັດໃນສົກປີ 2013-2014; ພ້ອມດຽວກັນນັ້ນ ກໍຮັກສາລະດັບລາຍຈ່າຍງົບປະມານ ບໍ່ໃຫ້ເກີນ 30% ຂອງ GDP ໂດຍຈັດສັນບູລິມະສິດ ໃຫ້ແກ່: ລາຍຈ່າຍເງິນເດືອນ, ເງິນອຸດໜູນ, ຈ່າຍລົງທຶນ, ຈ່າຍຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ແລະ ຈ່າຍຮ່ວງອື່ນໆ ທີ່ຈຳເປັນກ່ອນ. **ສຳລັບວິທີການ ແລະ ມາດຕະການຈັດຕັ້ງປະຕິບັດລະອຽດນັ້ນ** ດ້ານຫລັກການ ກອງປະຊຸມເຫັນດີຕາມການສະເໜີກະຊວງການເງິນ ແລະ ຕາມດຳລັດ ສະບັບເລກທີ 328/ລບ, ລົງວັນທີ 17 ກັນຍາ 2014 ຢ່າງເຂັ້ມງວດ, ແຕ່ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ເອົາໃຈໃສ່ຕື່ມ ດັ່ງນີ້:

1) ໃຫ້ປະຕິບັດຢ່າງເຄັ່ງຄັດຕໍ່ຫລັກການລວມສູນທາງດ້ານລາຍຮັບງົບປະມານ, ຫລີກລ່ຽງການເອົາລາຍຮັບພູດສູນກາງໄປຈ່າຍ ແລະ ເອົາຊັບພະຍາກອນໄປຕຸບກັບໂຄງການລົງທຶນ ຂອງທ້ອງຖິ່ນ.

2) ໃຫ້ເອົາໃຈໃສ່ປະຕິບັດນະໂຍບາຍ ແລະ ມາດຕະການປະຢັດ ແລະ ການຕ້ານການຟຸມເຟືອຍ ຂອງລັດຖະບານ ຢ່າງເຄັ່ງຄັດ ເພື່ອເຮັດໃຫ້ການນຳໃຊ້ງົບປະມານທີ່ມີຢູ່ຢ່າງຈຳກັດ ໃຫ້ເກີດປະໂຫຍດສູງສຸດ.

3) ໃຫ້ກະຊວງພາຍໃນຄົ້ນຄວ້າປັບປຸງນະໂຍບາຍ ກ່ຽວກັບການຈັດສັນຈຳນວນລັດຖະກອນຄືນໃໝ່ ເພື່ອເຮັດໃຫ້ຄັງເງິນເດືອນ ຢູ່ໃນລະດັບ 40% ຂອງລາຍຮັບພາຍໃນ ແລ້ວລາຍງານຕໍ່ລັດຖະບານ.

4) ໃຫ້ທ້ອງຖິ່ນເປັນເຈົ້າການຫລາຍຂຶ້ນກວ່າເກົ່າ ໃນການຄຸ້ມຄອງກວດກາພະນັກງານ-ລັດຖະກອນ ຂອງຂະແໜງການສາຍຕັ້ງ ຂອງກະຊວງການເງິນຢູ່ທ້ອງຖິ່ນ, ເປັນຕົ້ນ ຂະແໜງພາສີ, ອາກອນ ແລະ ຄັງເງິນແຫ່ງຊາດ ທີ່ປະຈຳຢູ່ທ້ອງຖິ່ນຂອງຕົນ.

1.3 ກ່ຽວກັບແຜນເງິນຕາແຫ່ງລັດ.

**1.3.1 ກອງປະຊຸມເຫັນວ່າ ການຈັດຕັ້ງປະຕິບັດແຜນເງິນຕາ ສົກປີ 2013-2014 ຮອດເດືອນສິງຫາ 2014** ແມ່ນໄດ້ຄວບຄຸມປະລິມານເງິນເພີ່ມຂຶ້ນຢູ່ໃນລະດັບ 19,2% ທຽບໃສ່ທ້າຍສົກປີຜ່ານມາ, ສະພາບອັດຕາແລກປ່ຽນ ແລະ ການສະ

ຫນອງເງິນຕາຕ່າງປະເທດ ມີຄວາມສະຫງົບດີ; ສັງຄົມມີຄວາມເຊື່ອຫມັ້ນ ຕໍ່ສະຖຽນລະພາບຂອງຄ່າເງິນກີບ; ເງິນຝາກເພີ່ມຂຶ້ນ ກວມເອົາ 48,08% ຂອງ GDP, ສິນເຊື່ອທົ່ວລະບົບທະນາຄານ ເພີ່ມຂຶ້ນ ກວມເອົາ 50,14% ຂອງ GDP; ຄັງສໍາຮອງເງິນຕາຕ່າງປະເທດ ສາມາດກຸ້ມການນໍາເຂົ້າໄດ້ 4,6 ເດືອນ, ຄ່າເງິນກີບອ່ອນຕົວລົງເລັກນ້ອຍ 1,93% ທຽບໃສ່ສະກຸນເງິນໂດລາສະຫະລັດ ແລະ ແຂງຄ່າຂຶ້ນ 3,53% ເມື່ອທຽບກັບສະກຸນເງິນບາດໄທ.

1.3.2 ມາດຕະການຈັດຕັ້ງປະຕິບັດໃນເວລາທີ່ຍັງເຫລືອ ຂອງສົກປີ 2013-2014 ແມ່ນໃຫ້ສູ້ຊົນປະຕິບັດບັນດາຄາດຫມາຍຂອງແຜນເງິນຕາ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ ເປັນຕົ້ນແມ່ນ ສ້າງຄັງສໍາຮອງເງິນຕາຕ່າງປະເທດ ໃຫ້ກຸ້ມການນໍາເຂົ້າ 5 ເດືອນຂຶ້ນໄປ, ຄຸ້ມຄອງອັດຕາແລກປ່ຽນ ໃຫ້ມີຄວາມສະຫງົບ.

1.3.3 ສໍາລັບເປົ້າຫມາຍການຈັດຕັ້ງປະຕິບັດແຜນເງິນຕາ ສົກປີ 2014-2015 ກອງປະຊຸມໄດ້ຊີ້ນໍາໃຫ້ເອົາໃຈໃສ່ຮັກສາລະດັບອັດຕາເງິນເຟີ້ ບໍ່ໃຫ້ເກີນອັດຕາການຂະຫຍາຍຕົວຂອງເສດຖະກິດ ແລະ ໃຫ້ປະລິມານເງິນ (M2) ເພີ່ມຂຶ້ນ ໃນລະດັບທີ່ເຫມາະສົມ ເມື່ອທຽບກັບປີຜ່ານມາ, ຮັບປະກັນຄັງສໍາຮອງຂອງເງິນຕາຕ່າງປະເທດ ໃຫ້ກຸ້ມການນໍາເຂົ້າ 5 ເດືອນຂຶ້ນໄປ, ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫລາດ ທີ່ມີການຄຸ້ມຄອງຂອງລັດ, ເຮັດໃຫ້ອັດຕາແລກປ່ຽນມີຄວາມສະຫງົບ ເງິນກີບແຂ່ງຄ່າ ຫລື ອ່ອນຄ່າ ຢູ່ໃນລະຫວ່າງ 5% ທຽບໃສ່ເງິນຕາຕ່າງປະເທດສະກຸນຫລັກ; ສູ້ຊົນໃຫ້ຍອດເງິນຝາກເພີ່ມຂຶ້ນ ກວມເອົາ 49% ຂອງ GDP, ສູ້ຊົນຮັກສາຍອດສິນເຊື່ອທະນາຄານເພີ່ມຂຶ້ນ 18,26% ແລະ ຮັກສາຍອດສິນເຊື່ອທະນາຄານທຸລະກິດ ໃນລະດັບ 47% ຂອງ GDP, ຄວບຄຸມອັດຕາ NPL ໃຫ້ຢູ່ໃນລະດັບບໍ່ເກີນ 3% ຂອງຍອດສິນເຊື່ອທັງຫມົດ.

1.3.4 ສໍາລັບວິທີການ ແລະ ມາດຕະການຈັດຕັ້ງປະຕິບັດແຜນເງິນຕາ ສົກປີ 2014-2015 ກອງປະຊຸມໄດ້ຊີ້ນໍາໃຫ້ຈັດຕັ້ງປະຕິບັດຢ່າງຄົບຖ້ວນ ແລະ ຮັດກຸມ ຕາມດໍາລັດ 328/ລບ, ພ້ອມນັ້ນ ກໍໃຫ້ສືບຕໍ່ເພີ່ມທະວີການຄຸ້ມຄອງ, ກວດກາ ແລະ ຮັບປະກັນໃຫ້ລະບົບທະນາຄານທຸລະກິດ ແລະສະຖາບັນການເງິນ ໃຫ້ມີຄວາມຫມັ້ນຄົງ; ຄຸ້ມຄອງບໍ່ໃຫ້ມີການນໍາໃຊ້ເງິນຕາຕ່າງປະເທດ ແບບຊະຊາຍ ແລະ ບໍ່ມີຈຸດສຸມ, ເອົາໃຈໃສ່ຊຸກຍູ້ ແລະ ນໍາໃຊ້ມາດຕະການສົ່ງເສີມ ໃຫ້ທົ່ວສັງຄົມຫັນມານໍາໃຊ້ເງິນກີບ ໃຫ້ແຂງແຮງຂຶ້ນກວ່າເກົ່າ.

1.4 <u>ກ່ຽວກັບຜົນການກວດກາການຈັດຕັ້ງປະຕິບັດຄໍາສັ່ງ ເລກທີ 13/ນຍ, ລົງວັນທີ 11 ພະຈິກ 2012 ວ່າດ້ວຍການໂຈະການພິຈາລະນາ ແລະ ການອະນຸຍາດໂຄງການລົງທຶນໃຫມ່ ສໍາລັບການຂຸດຄົ້ນ ແລະ ສໍາຫລວດແຮ່ທາດ, ການປູກຢາງພາລາ ແລະ ໄມ້ວິກ ໃນຂອບເຂດທົ່ວປະເທດ.</u> ກອງປະຊຸມສັງເກດເຫັນວ່າ ໂຄງການລົງທຶນດ້ານບໍ່ແຮ່ (ທີ່ເປັນຂໍ້ມູນສູນກາງ) ມີຈໍານວນ 502 ໂຄງການ; ໃນນັ້ນ ເປັນປະເພດ A+, A ມີ 14 ໂຄງການ, ປະເພດ B+,B ມີ 91 ໂຄງການ ແລະ C+,C ມີ 76 ໂຄງການ, ປະເພດອ່ອນຫລາຍທີ່ຈະນໍາໄປສູ່ການຍົກເລີກ 10 ໂຄງການ (ໃນນີ້, ບໍ່ທັນໄດ້ຈັດປະເພດ ມີ 45 ໂຄງການ); ໂຄງການປູກຢາງພາລາ ແລະ ໄມ້ວິກ ມີ 233 ໂຄງການ; ໃນນັ້ນ, ປະເພດ A ມີ 9 ໂຄງການ, ໂຄງການປະເພດ B ມີ 11, ໂຄງການ ປະເພດ C ມີ 12 ໂຄງການ, ສະເຫນີຍົກເລີກ 4 ໂຄງການ, ນອກນັ້ນ ແມ່ນຍັງບໍ່ທັນຈັດແບ່ງປະເພດສໍາເລັດ. ດ້ານຫລັກການ ກອງປະຊຸມເຫັນດີ ຕາມການສະເຫນີ ຂອງກະຊວງແຜນການ ແລະ ການລົງທຶນ. ພ້ອມກັນນັ້ນ ກໍໃຫ້ເອົາໃຈໃສ່ຕື່ມ ດັ່ງນີ້:

1.4.1 ໃຫ້ກະຊວງແຜນການ ແລະ ການລົງທຶນ ສືບຕໍ່ປະສານສົມທົບກັບບັນກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຕື່ມ ເພື່ອກວດກາ ແລະ ຊຸກຍູ້ໃຫ້ບັນດາບໍລິສັດທີ່ມີເງື່ອນໄຂໃຫ້ສືບຕໍ່ ຮີບຮ້ອນປະຕິບັດບັນດາຫນ້າວຽກຂອງຕົນ ໃຫ້ສໍາເລັດຕາມຂໍ້ຜູກພັນທີ່ໄດ້ເຊັນສັນຍາ ຫລື ບົດບັນທຶກຄວາມເຂົ້າໃຈກັບລັດຖະບານເຮົາ, ບໍ່ໃຫ້ແກ່ຍາວ ຫລື ຈ່ອງໂຄງການໄວ້ ແລະ ຂໍຕໍ່ສັນຍາຕື່ມເລື້ອຍໆ ຄືໄລຍະຜ່ານມາ, ຕ້ອງມີຄວາມເດັດຂາດ ເຂັ້ມງວດຕາມລະບຽບກົດຫມາຍກໍານົດໄວ້. ສໍາລັບບໍລິສັດໃດ ບໍ່ມີເງື່ອນໄຂຄົບຖ້ວນ ຫລື ບໍ່ປະຕິບັດຕາມຂໍ້ຜູກພັນສັນຍາກັບລັດຖະບານ ກໍໃຫ້ຍົກເລີກໄວ ໂດຍບໍ່ໃຫ້ມີເງື່ອນໄຂຕ່າງໆ ມາຕໍ່ລອງກັບລັດຖະບານອີກ.

1.4.2 ສໍາລັບບໍລິສັດທີ່ໄດ້ຜ່ານຂັ້ນຕອນການການຂຸດຄົ້ນ-ສໍາຫລວດ, ເຮັດບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ແລະ ສັງຄົມແລ້ວ ກໍໃຫ້ຮີບຮ້ອນປະຕິບັດບາດກ້າວການຂຸດຄົ້ນໃຫ້ໄວຂຶ້ນ, ເພື່ອມີເມັດເງິນຕົວຈິງມາລົງທຶນ ສ້າງສາພັດທະນາປະເທດຊາດ ຂອງພວກເຮົາ.

1.4.3 ໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ກະຊວງກະສິກາ ແລະ ປ່າໄມ້ ຄົ້ນຄວ້າສະຫລຸບຖອດຖອນບົດຮຽນ ກ່ຽວ

ກັບການຈັດຕັ້ງປະຕິບັດ ຄໍາສັ່ງເລກທີ 13/ນຍ, ລົງວັນທີ 11 ພະຈິກ 2012 ໃນເວລາອັນຄວນ ແລະ ສະເຫນີທິດທາງຫນ້າທີ່ວຽກງານດັ່ງກ່າວ ລາຍງານຄືນຕໍ່ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ.

1.5 ກ່ຽວກັບການຈັດບຸລິມະສິດ ໂຄງການລົງທຶນຂອງລັດ.

ພື້ນຖານກອງປະຊຸມເຫັນດີ ຕາມການສະເຫນີ, ແຕ່ໃຫ້ກະຊວງແຜນການ ແລະ ການລົງທຶນ ສົມທົບກັບກະຊວງການເງິນ ແລະ ບັນດາກະຊວງກ່ຽວຂ້ອງ ນໍາໄປປັບປຸງຕາມການປະກອບຄໍາເຫັນ ຂອງບັນດາຜູ້ແທນກອງປະຊຸມ, ໂດຍໃຫ້ເບິ່ງເຖິງຄວາມຈໍາເປັນ ແລະ ຄວາມອາດສາມາດຊໍາລະຂອງແຫລ່ງທຶນຕື່ມ.

II. ກອງປະຊຸມໄດ້ຮັບຟັງລາຍງານ ການຈັດຕັ້ງປະຕິບັດໂຄງການສົ່ງເສີມການຜະລິດສິນຄ້າ ແລະ ໂຄງການຄໍ້າປະກັນສະບຽງອາຫານ, ຊຶ່ງລາຍງານໂດຍທ່ານລັດຖະມົນຕີວ່າການ ກະຊວງກະສິກໍາ ແລະ ປ່າໄມ້.

2.1 ດ້ານຫລັກການ ກອງປະຊຸມ ເຫັນດີໃຫ້ມີ**ນະໂຍບາຍແຫ່ງຊາດ ເພື່ອຊຸກຍູ້ສົ່ງເສີມການຜະລິດເຂົ້າ ເພື່ອຄໍ້າປະກັນສະບຽງອາຫານ** ໂດຍປະກອບມີ 12 ນະໂຍບາຍ ຄື: ນະໂຍບາຍດ້ານການພັດທະນາ ແລະ ຄຸ້ມຄອງທີ່ດິນກະສິກໍາ, ນະໂຍບາຍສົ່ງເສີມດ້ານການຜະລິດ ແລະ ປຸງແຕ່ງ, ນະໂຍບາຍດ້ານການເງິນ ແລະ ທະນາຄານ, ນະໂຍບາຍດ້ານກະສິກໍາສະອາດ, ນະໂຍບາຍດ້ານພະລັງງານ, ນະໂຍບາຍດ້ານການຕະຫລາດ, ລາຄາ ແລະ ການລົງທຶນ, ນະໂຍບາຍດ້ານແຮງງານ, ນະໂຍບາຍດ້ານຊັບສິນທາງປັນຍາ, ມາດຖານ ແລະ ວັດແທກ, ນະໂຍບາຍຄົ້ນຄວ້າ ແລະ ສົ່ງເສີມດ້ານແນວພັນເຂົ້າ, ນະໂຍບາຍດ້ານການຂົນສົ່ງ, ນະໂຍບາຍພັດທະນາຊົນນະບົດ (ເຄຫາສະຖານ ແລະ ຜັງເມືອງ) ແລະ ນະໂຍບາຍສົ່ງເສີມການລົງທຶນຂອງຕ່າງປະເທດ.

2.2 ພ້ອມນັ້ນ ກໍເຫັນດີຮັບຮອງ**ນະໂຍບາຍແຫ່ງຊາດ ເພື່ອສົ່ງເສີມການລ້ຽງສັດ ແລະ ສັດນໍ້າ** ໂດຍປະກອບມີ 8 ນະໂຍບາຍ ຄື: ນະໂຍບາຍສົ່ງເສີມການນໍາໃຊ້ທີ່ດິນສໍາລັບການລ້ຽງສັດ ແລະ ສັດນໍ້າ, ນະໂຍບາຍດ້ານແຮງງານ, ນະໂຍບາຍດ້ານການເງິນ ແລະ ທະນາຄານ, ນະໂຍບາຍດ້ານພະລັງງານ, ນະໂຍບາຍສົ່ງເສີມການປຸງແຕ່ງ, ນະໂຍບາຍດ້ານການຄ້າ ແລະ ການຮັກສາສະຖຽນລະພາບດ້ານລາຄາ, ນະໂຍບາຍຕໍ່ຜູ້ຂົນສົ່ງສັດ ແລະ ຜະລິດຕະພັນສັດ ແລະ ສັດນໍ້າ ແລະ ນະໂຍບາຍຕໍ່ບຸກຄະລາກອນສັດຕະວະແພດ ແລະ ວິຊາການປະມົງ.

2.3 ດ້ານຫລັກການ ກອງປະຊຸມເຫັນດີ ກັບວິທີການ ແລະ ມາດຕະການຈັດຕັ້ງປະຕິບັດໂຄງການສົ່ງເສີມການຜະລິດສິນຄ້າ ແລະ ໂຄງການຄໍ້າປະກັນສະບຽງອາຫານ ທີ່ກະຊວງກະສິກໍາ ແລະ ປ່າໄມ້ ສະເຫນີມາ, ໂດຍສະເພາະແມ່ນ ການກໍານົດເອົາ 10 ແຂວງ ເປັນເປົ້າຫມາຍໃນການຈັດຕັ້ງປະຕິບັດ ຄື: ແຂວງຄໍາມ່ວນ, ແຂວງສະຫວັນນະເຂດ, ແຂວງສາລະວັນ, ແຂວງຈໍາປາສັກ, ແຂວງບໍລິຄໍາໄຊ, ແຂວງວຽງຈັນ, ນະຄອນຫລວງວຽງຈັນ, ແຂວງບໍ່ແກ້ວ, ແຂວງໄຊຍະບູລີ ແລະ ແຂວງຫລວງນໍ້າທາ ທີ່ມີເນື້ອທີ່ຮັບໃຊ້ໃຫ້ແກ່ການຜະລິດທັງຫມົດ 818.400 ເຮັກຕາ.

2.4 ມອບໃຫ້ກະຊວງ ກະສິກໍາ ແລະ ປ່າໄມ້ ສືບຕໍ່ປະສານສົມທົບກັບບັນດາຂະແຫນງການ ແລະ ທ້ອງຖິ່ນ ປັບປຸງບັນດານະໂຍບາຍ ແລະ ມາດຕະການທີ່ໄດ້ຮັບຮອງນີ້ ຕາມການປະກອບຄໍາເຫັນຂອງຜູ້ແທນກອງປະຊຸມ ແລະ ຊຸກຍູ້ໃຫ້ນະໂຍບາຍ ແລະ ມາດຕະການຕ່າງໆ ໄດ້ຮັບການຈັດຕັ້ງປະຕິບັດໂດຍໄວ, ໂດຍຖືເອົາການຜະລິດເຂົ້າ ແລະສັດ ເປັນບູລິມະສິດຂອງລັດຖະບານ.

2.5 ມອບໃຫ້ຫ້ອງວ່າການລັດຖະບານ ຕິດຕາມ-ກວດກາຜົນຂອງການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ເພື່ອລາຍງານນາຍົກ, ຮອງນາຍົກລັດຖະມົນຕີຜູ້ຮັບຜິດຊອບ ເພື່ອຊາບ ແລະ ມີທິດຊີ້ນໍາ ໃຫ້ປະກົດຜົນເປັນຈິງ.

III. ກອງປະຊຸມໄດ້ພິຈາລະນາ ແລະ ປະກອບຄໍາເຫັນ ຕໍ່ການປັບປຸງດໍາລັດ ສະບັບເລກທີ 269/ນຍ, ລົງວັນທີ 11 ພະຈິກ 2006 ວ່າດ້ວຍການປະຢັດ ແລະ ການຕ້ານການຟຸມເຟືອຍ, ສະເຫນີໂດຍທ່ານລັດຖະມົນຕີວ່າການ ກະຊວງການເງິນ ໃນນາມຄະນະຊີ້ນໍາຈັດຕັ້ງປະຕິບັດມາດຕະການປະຢັດຂອງລັດຖະບານ.

ດ້ານຫລັກການ ກອງປະຊຸມ ເຫັນດີຮັບຮອງເອົາຮ່າງດໍາລັດສະບັບດັ່ງກ່າວ ຕາມການສະເຫນີ, ແຕ່ໃຫ້ຄະນະຊີ້ນໍາຈັດຕັ້ງປະຕິບັດມາດຕະການປະຢັດ ຂອງລັດຖະບານ ເປັນເຈົ້າການສົມທົບກັບບັນດາກະຊວງ, ຂະແຫນງການ ແລະ ທ້ອງຖິ່ນ ປັບປຸງຮ່າງດໍາລັດສະບັບດັ່ງກ່າວ ຕາມການປະກອບຄໍາເຫັນ ຂອງຜູ້ແທນກອງປະຊຸມ ດັ່ງນີ້:

3.1 ເຫັນດີ ໃຫ້ກຳນົດຂອບເຂດຈັດຕັ້ງປະຕິບັດ ຂອງຮ່າງດຳລັດດັ່ງກ່າວ ໃຫ້ມີລັກສະນະກວມລວມ, ໂດຍເນັ້ນໃສ່ການປະຢັດການນຳໃຊ້ງົບປະມານຂອງລັດ, ສ່ວນເນື້ອໃນ ແລະ ບັນຫາໃດ ທີ່ເປັນອັນລະອຽດ ແມ່ນໃຫ້ກຳນົດເປັນລະບຽບການສະເພາະ ຂອງບັນດາກະຊວງ, ອົງການ ແລະ ທ້ອງຖິ່ນກ່ຽວຂ້ອງ.

3.2 ໃຫ້ກະຊວງການເງິນ ສົມທົບກັບກະຊວງການຕ່າງປະເທດ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ບັນດາກະຊວງ ແລະ ຂະແໜງການກ່ຽວຂ້ອງ ເພື່ອຜັນຂະຫຍາຍເນື້ອໃນຂອງດຳລັດດັ່ງກ່າວ ອອກເປັນລະບຽບການລະອຽດໃນແຕ່ລະດ້ານ, ແຕ່ລະຂົງເຂດ ຕາມຄວາມຮັບຜິດຊອບຂອງຕົນ ເປັນຕົ້ນແມ່ນ ການຄຸ້ມຄອງການລົງທຶນຂອງລັດ, ການຄຸ້ມຄອງ-ການນຳໃຊ້ພາຫະນະ ແລະ ຊັບສິນຂອງລັດ; ໄຟຟ້າ, ນ້ຳປະປາ, ໂທລະສັບ ແລະ ການຈັດຊື້-ຈັດຈ້າງດ້ວຍງົບປະມານຂອງລັດ; ການຈັດພິທີທາງການ, ພິທີທາງການເຄິ່ງປະເພນີ ແລະອື່ນໆ ບົນພື້ນຖານສອດຄ່ອງກັບເງື່ອນໄຂ, ສະພາບຕົວຈິງຂອງປະເທດເຮົາ ແລະ ມີຄວາມສາມາດຈັດຕັ້ງປະຕິບັດໃຫ້ເປັນຈິງໄດ້, ດີແທ້ ແມ່ນໃຫ້ທັນໄດ້ປະກາດໃຊ້ ພາຍໃນປີ 2014 ນີ້ ທັງຫມົດ.

3.3 ໃນໄລຍະຍາວ ໃຫ້ຄົ້ນຄວ້າສ້າງເປັນປື້ມຄູ່ມື ກ່ຽວກັບນະໂຍບາຍປະຢັດແຫ່ງຊາດ ເພື່ອໂຄສະນາເຜີຍແຜ່ ແລະປູກຈິດສຳນຶກໃຫ້ທົ່ວສັງຄົມ ໃຫ້ຫັນມາໃສ່ໃຈ ໃນການປະຢັດ ຢ່າງເປັນປົກກະຕິ ຜ່ານສື່ຕ່າງໆ ເປັນຕົ້ນ ໂທລະພາບ, ວິທະຍຸ, ວາລະສານ, ຫນັງສືພິມ, ເຄື່ອງມືສື່ສານມວນຊົນ ແລະ ສື່ການຮຽນ-ການສອນຕ່າງໆ, ຕາມສະຖາບັນການສຶກສາ ແລະ ໂຮງຮຽນນັບແຕ່ປະຖົມ ຈົນເຖິງມະຫາວິທະຍາໄລ ກໍ່ໃຫ້ມີການປູກຈິດສຳນຶກການປະຢັດ ແລະ ຕ້ານການຟຸມເຟືອຍໄປພ້ອມກັນ.

3.4 ກອງປະຊຸມຮຽກຮ້ອງໃຫ້ຜູ້ແທນກອງປະຊຸມ ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາມາດຕະການປະຢັດ ແລະ ຕ້ານການຟຸມເຟືອຍ ຂອງລັດຖະບານ ດ້ວຍຄວາມຮັບຜິດຊອບສູງ, ໂດຍສະເພາະຜູ້ທີ່ເປັນການນຳ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ຕ້ອງເປັນແບບຢ່າງ ແລະ ນຳພາສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ຜູ້ປະກອບການ ແລະ ປະຊາຊົນບັນດາເຜົ່າ ທີ່ຢູ່ໃນຄວາມຮັບຜິດຊອບ ດູແລ-ຄຸ້ມຄອງຂອງຕົນ ໃຫ້ຫັນມາໃສ່ໃຈໃນການປະຢັດ, ຍົກສູງປະສິດທິພາບ, ປະສິດທິຜົນໃນການເຮັດວຽກງານ ເພື່ອປະກອບສ່ວນສ້າງສາພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ໃຫ້ມີຄວາມເຂັ້ມແຂງ ແລະສ້າງອະນາຄົດທີ່ສົດໃສ ໄວ້ໃຫ້ແກ່ລູກຫລານຂອງພວກເຮົາສືບຕໍ່ໄປ.

3.5 ຫລັງຈາກປັບປຸງແລ້ວ ສົ່ງໃຫ້ຫ້ອງວ່າການລັດຖະບານ ບັນນາທິການຮຽບຮຽງລະອຽດຕື່ມ ແລ້ວຈຶ່ງສະເຫນີນາຍົກລັດຖະມົນຕີ ລົງນາມປະກາດໃຊ້ ໃນເວລາອັນຄວນ.

IV. <u>ກອງປະຊຸມໄດ້ຮັບຟັງການລາຍງານຄວາມຄືບຫນ້າ ການກະກຽມຄວາມພ້ອມດ້ານຕ່າງໆ ໃນການເຂົ້າຮ່ວມເປັນປະຊາຄົມອາຊຽນ,</u> ລາຍງານໂດຍທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ທ່ານລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ.

4.1 ກອງປະຊຸມໄດ້ຍົກໃຫ້ເຫັນວ່າ ອາຊຽນ ໄດ້ສ້າງຕັ້ງຂຶ້ນໃນວັນທີ 8 ສິງຫາ 1967, ສປປ ລາວ ໄດ້ເຂົ້າເປັນສະມາຊິກໃນວັນທີ 23 ກໍລະກົດ 1997. ອາຊຽນກາຍເປັນອົງການຈັດຕັ້ງທີ່ເຂັ້ມແຂງໃນພາກພື້ນ ມີກົດບັດເປັນຂອງຕົນເອງ ເພື່ອພ້ອມກັນປົກປັກຮັກສາ ແລະ ສົ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ຄວາມວັດທະນາຖາວອນຂອງພາກພື້ນ ແລະ ປັດຈຸບັນອາຊຽນພວມສຸມໃສ່ການສ້າງປະຊາຄົມອາຊຽນ ທີ່ປະກອບດ້ວຍ 3 ເສົາຄ້ຳ ຄື:

4.1.1 ປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ ແນໃສ່ສ້າງສະພາບແວດລ້ອມແຫ່ງສັນຕິພາບ ແລະ ສະຖຽນລະພາບທີ່ເອື້ອອຳນວຍໃຫ້ແກ່ຂົງເຂດເສດຖະກິດ ແລະ ວັດທະນະທຳສັງຄົມ.

4.1.2 ປະຊາຄົມເສດຖະກິດອາຊຽນ ໃຫ້ສຳເລັດ ໃນວັນທີ 31 ທັນວາ 2015 ຊຶ່ງແນໃສ່ການບັນລຸ 4 ເປົ້າໝາຍຄື: ❶ ເປັນຕະຫຼາດ ແລະ ຖານການຜະລິດໜຶ່ງດຽວ, ❷ ເປັນພາກພື້ນທີ່ສາມາດແຂ່ງຂັນສູງ, ❸ ພັດທະນາເສດຖະກິດຢ່າງທ່ຽງທຳດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຮັດແຄບຄວາມແຕກໂຕນດ້ານການພັດທະນາ, ❹ ເຊື່ອມໂຍງເຂົ້າກັບເສດຖະ ກິດສາກົນ ດ້ວຍການສ້າງເຂດການຄ້າເສລີ ລະຫວ່າງອາຊຽນກັບບັນດາປະເທດຄູ່ເຈລະຈາ ບົນພື້ນຖານການເປັນແກນກາງຂອງອາຊຽນ.

4.1.3 ປະຊາຄົມວັດທະນະທຳ-ສັງຄົມອາຊຽນ ແນໃສ່ສ້າງສັງຄົມອາຊຽນ ໃຫ້ເປັນສັງຄົມທີ່ໂອບເອື້ອອາລີ, ຮ່ວມກັນອານຸລັກ ແລະ ສົ່ງເສີມການແລກປ່ຽນວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ທີ່ເປັນເອກະລັກຂອງແຕ່ລະປະເທດສະມາ

ຊີກອາຊຽນ ແລະ ພັດທະນາປະຊາຊົນອາຊຽນ ໃຫ້ມີສຸຂະພາບສົມບູນ ແລະ ມີຄວາມຮູ້ຄວາມສາມາດ ໃຫ້ນັບມື້ນັບສູງຂຶ້ນເລື້ອຍໆ.

4.2 ກອງປະຊຸມໄດ້ໃຫ້ຂໍ້ສັງເກດວ່າ ການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນແມ່ນມີຄວາມຈຳເປັນພາວະວິໄສ, ມີທັງກາລະໂອກາດ ແລະ ສິ່ງທ້າທາຍຫຼາຍອັນ. ໃນໄລຍະຜ່ານມາ ທົ່ວສັງຄົມໄດ້ມີການເຄື່ອນໄຫວຢ່າງເປັນຂະບວນການ ເພື່ອກະກຽມໃຫ້ແກ່ການເຂົ້າປະຊາຄົມເສດຖະກິດອາຊຽນ ແລະ ກໍມີຜົນສຳເລັດໃນຫລາຍດ້ານ ໃນລະດັບດີພໍສົມຄວນ. ແຕ່ຂະບວນການດັ່ງກ່າວ ເມື່ອທຽບກັບຄວາມສຳຄັນ ແລະ ເລັ່ງດ່ວນຂອງວຽກງານ ຍັງບໍ່ທັນແຂງແຮງເທົ່າທີ່ຄວນ, ໂດຍສະເພາະແມ່ນການຕິດຕາມກວດກາບັນດາພັນທະ ແລະ ໜ້າວຽກ ໃນການເຂົ້າປະຊາຄົມເສດຖະກິດອາຊຽນ ລວມທັງກົນໄກການປະສານງານ ລະຫວ່າງ ກະຊວງຂະແໜງການ ແລະທ້ອງຖິ່ນຕໍ່ກັບວຽກງານນີ້. ພ້ອມດຽວກັນນັ້ນ, ຄວາມຮັບຮູ້ເຂົ້າໃຈ ກໍ່ຍັງບໍ່ທັນເລິກເຊິ່ງກ້ວາງຂວາງເທົ່າທີ່ຄວນ ລວມທັງບັນດາພື້ນຖານໂຄງລ່າງທີ່ມີກໍ່ຍັງບໍ່ທັນເປັນລະບົບ ແລະ ພຽງພໍເພື່ອຮອງຮັບກັບການເຊື່ອມໂຍງ.

4.3 ສໍາລັບວຽກງານຈຸດສຸມແຕ່ນີ້ ຫາ ວັນທີ 31 ທັນວາ 2015 ນັ້ນ, ໂດຍພື້ນຖານກອງປະຊຸມເຫັນດີ ຕາມການສະເໜີຂອງກະຊວງການຕ່າງປະເທດ ແລະ ກະຊວງອຸດສາຫະກໍາ ແລະ ການຄ້າ. ພ້ອມກັນນັ້ນ, ກໍໃຫ້ເອົາໃຈໃສ່ຕື່ມ ຕາມການປະກອບຄໍາເຫັນ ຂອງຜູ້ແທນກອງປະຊຸມດັ່ງນີ້:

4.3.1 ເພີ່ມທະວີຄວາມເອົາໃຈໃສ່ ຕໍ່ວຽກງານການສຶກສາອົບຮົມການເມືອງແນວຄິດ ໃຫ້ພະນັກງານ, ລັດຖະກອນ, ທະຫານ, ຕໍາຫລວດ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນບັນດາເຜົ່າ, ເພື່ອໃຫ້ເຂົ້າໃຈແຈ້ງ ຈຸດປະສົງ, ຄາດໝາຍ ແລະ ສ້າງຂະບວນການກະກຽມຄວາມພ້ອມ ເຂົ້າປະຊາຄົມອາຊຽນ ຂອງປະເທດພວກເຮົາ ຕາມພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ, ໂດຍມອບໃຫ້ຄະນະໂຄສະນາອົບຮົມສູນກາງພັກ ເປັນຜູ້ເຜີຍແຜ່ໂຄສະນາເອກະສານດັ່ງກ່າວ.

4.3.2 ປັບປຸງຄະນະກໍາມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ທີ່ພາຍໃຕ້ການເປັນປະທານຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ໂດຍລວມເອົາທຸກວຽກງານການເຊື່ອມໂຍງ ລວມທັງວຽກງານຮ່ວມມືເສດຖະກິດອາຊຽນ. ໃນນີ້, ໃຫ້ເລັ່ງການຈັດພິມພັນທະຂອງ ສປປ ລາວ ໃນການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ ເພື່ອເຜີຍແຜ່ໃຫ້ທົ່ວເຖິງ ແລະ ຈັດຕັ້ງປະຕິບັດພັນທະທີ່ໃຫ້ໄວ້. ພ້ອມດຽວກັນນັ້ນ, ໃຫ້ຫັນເອົາວຽກງານການເຊື່ອມໂຍງເຂົ້າໃນແຜນວຽກ-ແຜນງານລະອຽດ ຂອງແຜນພັດທະນາເສຖະກິດ-ສັງຄົມ ຂອງບັນດາຂະແໜງການ ແລະທ້ອງຖິ່ນ ໂດຍຖອດຖອນບົດຮຽນຈາກປະເທດເພື່ອນມິດ ແລະ ປະເທດໃກ້ຄຽງ.

4.3.3 ສືບຕໍ່ປະສານຢ່າງໃກ້ຊິດ ກັບສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ເພື່ອກະກຽມຄວາມພ້ອມຂອງພາກທຸລະກິດ ໃນການຍາດແຍ່ງເອົາຜົນປະໂຫຍດ ຈາກການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ ເວົ້າສະເພາະ ແລະ ການເຊື່ອມໂຍງເຂົ້າສາກົນເວົ້າລວມ.

V. <u>ກອງປະຊຸມໄດ້ຮັບຟັງການລາຍງານ ບົດສະຫລຸບຕີລາຄາຜົນການບໍລິຫານງານ ຂອງລັດຖະບານ ໃນສົກປີ 2013-2014 ແລະ ແຜນວຽກຈຸດສຸມ ສົກປີ 2014-2015</u>, ຊຶ່ງສະເໜີໂດຍທ່ານລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ.

ໂດຍພື້ນຖານ ກອງປະຊຸມເຫັນດີ ຮັບຮອງເອົາບົດລາຍງານ ຂອງຫ້ອງວ່າການລັດຖະບານ, ພ້ອມກັນນັ້ນ ໄດ້ເນັ້ນໜັກຕື່ມ ດັ່ງນີ້:

5.1 ກ່ຽວກັບດ້ານດີ ແລະ ຜົນງານ: ເຫັນວ່າ ລັດຖະບານ ໄດ້ເປັນເອກະພາບ ແລະ ມີຄວາມຮັບຜິດຊອບສູງ ຕໍ່ການປະຕິບັດໜ້າທີ່ການເມືອງຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 8 ຂອງກົດໝາຍວ່າດ້ວຍລັດຖະບານ ແລະ 6 ໜ້າວຽກຈຸດສຸມ ຂອງລັດຖະບານ. ເຖິງວ່າສະພາບແວດລ້ອມພາຍໃນ ແລະ ສາກົນ ມີຄວາມຫຍຸ້ງຍາກຫລາຍປະການ, ແຕ່ລັດຖະບານ ກໍ່ສາມາດບໍລິຫານງານວຽກງານຂອງຕົນ ຢ່າງເປັນລະບົບ, ສາມາດປະຕິບັດ 2 ໜ້າທີ່ຍຸດທະສາດ ປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃຫ້ມີບາດກ້າວຂະຫຍາຍຕົວ ແລະ ເຂັ້ມແຂງເປັນກ້າວໆ; ຜົນງານອັນພົ້ນເດັ່ນແມ່ນ: ເສດຖະກິດສືບຕໍ່ຂະຫຍາຍຕົວ ຢ່າງຕໍ່ເນື່ອງ ໃນລະດັບ 7,6%, ດ້ານສັງຄົມ ແລະ ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງດີຂຶ້ນກວ່າແຕ່ກ່ອນ, ການບໍລິຫານລັດໄດ້ຮັບການປັບປຸງໃຫ້ດີຂຶ້ນກ້າວໜຶ່ງ, ວຽກງານເຕັກໂນໂລຊີຂໍ້ມູນຂ່າວສານ ໄດ້ຮັບການພັດທະນາ ແລະນໍາໃຊ້ເຂົ້າໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ, ຄວາມຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນ ໂດຍສະເພາະເມືອງ, ບ້ານທີ່ເຮັດທົດລອງ 3 ສ້າງ ໄດ້ຮັບການຊຸກຍູ້ສົ່ງເສີມ, ຈາກບັນດາໝາກຜົນ ຂອງການບໍລິຫານວຽກງານ ຂອງລັດຖະບານ ໄດ້ເປັນອົງປະກອບທີ່ສໍາຄັນ ເຮັດໃຫ້ສະຖຽນລະພາບທາງການເມືອງ ສືບຕໍ່ມີຄວາມໜັກແໜ້ນ, ການເຊື່ອມໂຍງສາກົນມີ

ບາດກ້າວຂະຫຍາຍໂຕ ແລະ ພົ້ນເດັ່ນຂຶ້ນ, ຊຶ່ງໃນປີຜ່ານມານີ້ ສປປ ລາວ ເຮົາໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີອາຊຽນ ໃນຂົງເຂດຕ່າງໆ ເຊັ່ນ: ກອງປະຊຸມລັດຖະມົນຕີສຶກສາອາຊຽນ, ກອງປະຊຸມລັດຖະມົນຕີພະລັງງານອາຊຽນ ແລະ ໃນປັດຈຸບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ແມ່ນກຳລັງສ້າງເງື່ອນໄຂດ້ານຕ່າງໆ ເພື່ອກະກຽມໃຫ້ແກ່ການເຂົ້າເປັນປະຊາຄົມອາຊຽນ ໃນທ້າຍປີ 2015 ຢ່າງຕັ້ງໜ້າ.

5.2 ກ່ຽວກັບຈຸດອ່ອນ ແລະ ຂໍ້ຄົງຄ້າງຈຳນວນໜຶ່ງ ທີ່ຕ້ອງສືບຕໍ່ແກ້ໄຂ ແມ່ນ: ການອຳນວຍຄວບຄຸມທາງດ້ານເສດຖະກິດ ເຫັນວ່າຍັງມີຫລາຍອັນບໍ່ທັນຄ່ອງຕົວ, ການປະຕິບັດບັນດານິຕິກຳບໍ່ສັກສິດ, ມີປະກົດການລະເມີດວິໄນການເງິນ, ວິໄນແຜນການ, ການຄຸ້ມຄອງການຮົ່ວໄຫລຂອງການຈັດເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ຍັງບໍ່ທັນເປັນໄປຕາມລະບຽບການເງິນ; ການແບ່ງຄວາມຮັບຜິດຊອບ ລະຫວ່າງ ສູນກາງກັບສູນກາງ ແລະ ສູນກາງກັບທ້ອງຖິ່ນ ບໍ່ຊັດເຈນ, ມີຄວາມຊໍ້າຊ້ອນ ແລະ ກ້າວກ່າຍ ໜ້າທີ່ ແລະສິດ ເຊິ່ງກັນແລະກັນ; ບາງບັນຫາພົ້ນເດັ່ນ ເປັນຕົ້ນແມ່ນ: ບັນຫາທີ່ດິນ, ບັນຫາການຄຸ້ມຄອງໄມ້, ແຮ່ທາດ, ການເຮັດໂຄງການນອກແຜນ, ບັນຫາຢາເສບຕິດ, ບັນຫາແຮງງານ, ການສ້າງກຸ່ມແກ່ງຕີກັນຂອງນັກຮຽນ ແລະ ຄວາມບໍ່ໂປ່ງໃສຂອງເຈົ້າໜ້າທີ່ລັດ ຍັງບໍ່ທັນໄດ້ຮັບການແກ້ໄຂ ຢ່າງເປັນຮູບປະທຳ; ການແກ້ໄຂນະໂຍບາຍ ຕໍ່ພະນັກປະຕິວັດອາວຸໂສ ຜູ້ມີຄຸນງາມດີຕໍ່ປະເທດຊາດ ຍັງເຮັດໄດ້ໜ້ອຍ; ການຜັນຂະຫຍາຍມະຕິກອງປະຊຸມລັດຖະບານ ໃນບາງຂະແໜງການ ແລະ ບາງທ້ອງຖິ່ນ ແມ່ນຍັງເຮັດບໍ່ໄດ້ດີ.

ກອງປະຊຸມໄດ້ຮຽກຮ້ອງໃຫ້ສະມາຊິກລັດຖະບານ, ບັນດາກະຊວງ, ອົງການ ແລະ ບັນດາທ້ອງຖິ່ນ ເອົາໃຈໃສ່ແກ້ໄຂບັນດາຈຸດອ່ອນຂໍ້ຄົງຄ້າງທີ່ກ່ຽວຂ້ອງກັບຂະແໜງການ ແລະ ທ້ອງຖິ່ນຕົນ ດ້ວຍຄວາມຮັບຜິດຊອບສູງ ແລະ ພ້ອມກັນຊຸກຍູ້ສົ່ງເສີມຈຸດດີ ໃຫ້ມີບາດກ້າວແຂງແຮງຂຶ້ນຕື່ມ.

VI. <u>ກ່ຽວກັບແຜນວຽກຈຸດສຸມຂອງລັດຖະບານ ປະຈຳສົກປີ 2014-2015</u> ແມ່ນຍັງຢືນຢັນປະຕິບັດຕາມ 10 ໜ້າທີ່ທີ່ໄດ້ກຳນົດໄວ້ ໃນມາດຕາ 8 ຂອງກົດໝາຍວ່າດ້ວຍລັດຖະບານ, ມະຕິ 7 ແລະ 8 ສະໄໝທີ IX ຂອງພັກ, ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 06/ສພຊ, ລົງວັນທີ 25 ກໍລະກົດ 2014 ແລະ ດຳລັດເລກທີ 328/ນຍ, ລົງວັນທີ 17 ກັນຍາ 2014 ຊຶ່ງມີລາຍລະອຽດ ລຸ່ມນີ້:

6.1 ຈັດຕັ້ງນຳພາ ການພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ການເກັບກູ້ລະເບີດບໍ່ທັນແຕກ.

\+ ສືບຕໍ່ຈັດຕັ້ງຜັນຂະຫຍາຍຄຳສັ່ງ 03/ກມສພ ຕິດພັນກັບວຽກງານ 3 ສ້າງ, ໃນທ້າຍປີ 2015 ສູ້ຊົນເຮັດໃຫ້ອັດຕາຄົນທຸກຍາກຫລຸດລົງ ໃຫ້ໄດ້ຕາມຄາດໝາຍ ແລະ ອັດຕາຄອບຄົວທຸກຍາກ ຫລຸດລົງໃຫ້ໄດ້ຕໍ່າກວ່າ 91.405 ຄອບຄົວ ຫລື ເທົ່າກັບ 7,11% ຂອງຄອບຄົວທັງໝົດທົ່ວປະເທດ, ແກ້ໄຂບັນຫາການເຄື່ອນຍ້າຍແບບຊະຊາຍຂອງພົນລະເມືອງໃນທົ່ວປະເທດໃຫ້ໄດ້ໂດຍພື້ນຖານ, ສຸມໃສ່ຈັດສັນພູມລຳເນົາຄົງທີ່, ບ່ອນທຳມາຫາກິນຖາວອນ ແລະ ອາຊີບໝັ້ນທ່ຽງຂອງຈຸດທີ່ຍັງເຫລືອໃຫ້ໄດ້ຕາມແຜນທີ່ວາງໄວ້; ຫັນບ້ານໃຫຍ່ໃຫ້ກາຍເປັນກຸ່ມການຜະລິດຂະໜາດໃຫຍ່ ເພື່ອລຶບລ້າງການປູກເຂົ້າໄຮ່, ການປູກຝິ່ນ-ກັນຊາໃຫ້ໄດ້ໂດຍພື້ນຖານ; ສືບຕໍ່ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍ ໃຫ້ໄດ້ 33 ແຫ່ງໃນທົ່ວປະເທດ.

\+ ສືບຕໍ່ຕິດຕາມຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດບັນດາໂຄງການທີ່ມີເປົ້າໝາຍ ຫລຸດຜ່ອນຄວາມທຸກຍາກລວມທັງບັນດາໂຄງການຊ່ວຍເຫລືອລ້າ ແລະ ກູ້ຢືມຈາກຕ່າງປະເທດ ໂດຍສະເພາະໃນ 10 ເຂດຈຸດສຸມຂອງລັດຖະບານ ແລະ 54 ຈຸດສຸມຂອງທ້ອງຖິ່ນ ເພື່ອແກ້ໄຂຄວາມທຸກຍາກ, ໂຄງການຈຸດສຸມເພື່ອຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນທີ່ຖາວອນໃຫ້ແກ່ປະຊາຊົນ (167 ຈຸດສຸມ) .

\+ ສືບຕໍ່ສຸມໃສ່ແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ໂດຍສະເພາະຢູ່ເຂດຊຸມຊົນ ແລະ ເຂດໂຄງການພັດທະນາຂອງລັດຖະບານ ໃຫ້ໄດ້ຕື່ມອີກ 20.000 ເຮັກຕາ ພ້ອມທັງສູ້ຊົນຫລຸດຈຳນວນຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກໃຫ້ຕໍ່າກວ່າເກົ່າອີກ.

6.2 ຈັດຕັ້ງນຳພາການພັດທະນາເສດຖະກິດ ແລະ ອຳນວຍຄວບຄຸມເສດຖະກິດມະຫາພາກ ໃນເງື່ອນໄຂທີ່ຫຍຸ້ງຍາກໃຫ້ດີຂຶ້ນກວ່າເກົ່າ ໂດຍເອົາໃຈໃສ່ບາງວຽກງານສຳຄັນ ດັ່ງນີ້:

1). ເພີ່ມທະວີຄວາມຮັບຜິດຊອບ ຕໍ່ການຄຸ້ມຄອງເສດຖະກິດມະຫາພາກ, ຮັບປະກັນເສດຖະກິດມະຫາພາກ ໃຫ້ມີຄວາມໝັ້ນທ່ຽງ, ເອົາໃຈໃສ່ປະຕິບັດ 6 ມາດຕະການຮັກສາສະຖຽນລະພາບ ຂອງເສດຖະກິດມະຫາພາກ ຂອງລັດຖະບານ ທີ່ກຳນົດໃນຂໍ້ຕົກລົງ 14/ນຍ, ລົງວັນທີ 7 ກຸມພາ 2014.

2). ຄະນະລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ເພີ່ມທະວີຄວາມຮັບຜິດຊອບ ຕໍ່ການແກ້ໄຂໜີ້ສິນຂອງງົບປະມານ, ໃຫ້ຄະນະແກ້ໄຂໜີ້ສິນຂອງລັດຖະບານ ເປັນໃຈກາງຄົ້ນຄວ້າຮູບການ ແລະ ວິທີການແກ້ໄຂໜີ້ສິນ ແລະ ນຳສະເໜີລັດຖະບານຕໍ່ໄປ ເພື່ອເຮັດໃຫ້ໜີ້ທີ່ມີນັ້ນ ຫລຸດລົງເປັນກ້າວໆ.

3). ນຳພາ ແລະ ປຸກລະດົມໃຫ້ທຸກພາກສ່ວນເສດຖະກິດ ເຂົ້າຮ່ວມການພັດທະນາປະເທດ, ເຄື່ອນໄຫວ ແລະ ປະຕິບັດພັນທະຢ່າງຖືກຕ້ອງຕາມລະບຽບກົດໝາຍ; ຊຸກຍູ້ສົ່ງເສີມການຜະລິດ, ການຈຳໜ່າຍ ແລະ ບໍລິການສິນຄ້າ ໃຫ້ມີບາດກ້າວຂະຫຍາຍຕົວໃນຈັງຫວະທີ່ດີກວ່າເກົ່າ; ໃຫ້ທຸກພາກສ່ວນເສດຖະກິດ ເຄື່ອນໄຫວຕາມກົນໄກເສດຖະກິດຕະຫລາດ ທີ່ມີການຄຸ້ມຄອງຂອງລັດ ແລະ ແກ້ໄຂກົນໄກບໍລິຫານເກື້ອກຸນໃນພາກວິສາຫະກິດ; ສົ່ງເສີມການພັດທະນາວິສາຫະກິດປະເພດຕ່າງໆ, ລວມທັງສົ່ງເສີມອຸດສາຫະກຳຂະໜາດກາງ ແລະ ຂະໜາດນ້ອຍໃຫ້ແຂງແຮງກວ່າເກົ່າ.

4). ສະມາຊິກລັດຖະບານ ທັງຈັດຕັ້ງນຳພາ ແລະ ບໍລິຫານວຽກງານໃນຂະແໜງການຕົນ ຕາມພາລະບົດບາດ ໜ້າທີ່ ແລະ ສິດ ທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍລັດຖະບານ ແລະ ການມອບວຽກປະຈຳສົກປີ ຕາມໝວດ 7 ຂອງດຳລັດສະບັບເລກທີ 328/ລບ, ລົງວັນທີ 17 ກັນຍາ 2014.

**6.3 ການນຳພາໃນຂົງເຂດວັດທະນະທຳ-ສັງຄົມ.**

ພັດທະນາຂະແໜງວັດທະນະທຳ-ສັງຄົມ ໂດຍສືບຕໍ່ສູ້ຊົນຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດ ດ້ານການພັດທະນາ ໃຫ້ບັນລຸຄາດໝາຍທີ່ວາງໄວ້, ໃນນີ້ ໃຫ້ເອົາໃຈໃສ່ ຄື:

+ ຮີບຮ້ອນແກ້ໄຂ ການສ້າງແຮງງານໃຫ້ມີທັກສະ ແລະ ມີຄຸນນະພາບ, ການຝຶກວິຊາຊີບ ເພື່ອຮອງຮັບການເຂົ້າ AEC, ການສະໜອງແຮງງານໃຫ້ພຽງພໍໃນເຂດທີ່ຕ້ອງການຫລາຍ ເພື່ອແກ້ໄຂບັນຫາການຂາດແຄນແຮງງານ ແລະ ຈັດຫາງານ ໃຫ້ເຂດທີ່ມີແຮງງານເຫລືອ ເພື່ອຫລຸດຜ່ອນບັນຫາການລັກລອບໄປອອກແຮງງານຢູ່ຕ່າງປະເທດ ແບບຜິດກົດໝາຍ; ຂະຫຍາຍອັດຕາການປະກັນສັງຄົມ ແລະ ປະກັນສຸຂະພາບໃຫ້ທົ່ວທຸກແຂວງ.

+ ດຳເນີນການບຸກທະລຸຢ່າງຈິງຈັງກວ່າເກົ່າ ໃນການປະຕິບັດນະໂຍບາຍປະຕິຮູບການສຶກສາ, ການພັດທະນາຊັບພະຍາກອນມະນຸດ; ສົ່ງເສີມການສຶກສານອກໂຮງຮຽນຢ່າງເອົາຈິງເອົາຈັງ ແລະ ເພີ່ມການລົງທຶນໃສ່ສູນສຶກສາຊຸມຊົນ; ສ້າງມາດຕະຖານຫລັກສູດອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ ຕາມຄວາມຕ້ອງການຂອງຕະຫລາດແຮງງານ ພ້ອມທັງສົ່ງເສີມການເຂົ້າຮຽນເຕັກ ນິກວິຊາຊີບໃຫ້ຫລາຍ; ກະກຽມຄວາມພ້ອມດ້ານຕ່າງໆ ໃນການຈັດມະຫາກຳກິລາແຫ່ງຊາດ; ເອົາໃຈໃສ່ແກ້ໄຂບັນຫານັກຮຽນຕົ້ງກຸ່ມແກ້ງ-ອາລະວາດຕີກັນ.

+ ສຸມໃສ່ການຈັດຕັ້ງປະຕິບັດຄາດໝາຍ MDGs ໃນຂະແໜງສາທາລະນະສຸກ, ປັບປຸງການບໍລິການ ແລະ ຂະຫຍາຍຕາໜ່າງການບໍລິການດ້ານສາທາລະນະສຸກ; ເພີ່ມທະວີສືບຕໍ່ຕິດຕາມເຝົ້າລະວັງ ແລະ ປ້ອງກັນການລະບາດຂອງພະຍາດຕາມລະດູການ, ພະຍາດໄຂ້ຫວັດສັດປີກ ແລະ ພະຍາດອີໂບລາ ແລະ ແກ້ໄຂໃຫ້ທັນເວລາ ໃນກໍລະນີເກີດການລະບາດ; ເອົາໃຈໃສ່ສ້າງບຸກຄະລາກອນຂະແໜງສາທາລະນະສຸກ ໃຫ້ພຽງພໍ ແລະ ມີຄຸນນະພາບ, ຕິດພັນກັບການປະກອບອຸປະກອນການແພດ ທີ່ຈຳເປັນຈຳນວນຫນຶ່ງ.

+ ສືບຕໍ່ປັບປຸງວຽກງານສື່ມວນຊົນ ໃຫ້ມີການຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອສາມາດຕອບສະໜອງຂໍ້ມູນ-ຂ່າວສານ ທີ່ເຊື່ອຖືໄດ້ ໃຫ້ແກ່ສັງຄົມ ໄດ້ຢ່າງເລິກເຊິ່ງ ແລະ ກວ້າງຂວາງ, ເປັນເຄື່ອງມືອັນແຫລມຄົມຂອງພັກ ແລະ ລັດໃນແຕ່ລະໄລຍະ; ພັດທະນາສື່ສິ່ງພິມ, ສື່ເອເລັກໂຕຣນິກໃຫ້ມີຄວາມທັນສະໄໝ ສອດຄ່ອງກັບການຂະຫຍາຍຕົວຂອງສັງຄົມ; ສືບຕໍ່ຟື້ນຟູ ປົກປັກຮັກສາພັດທະນາ ແລະ ເສີມຂະຫຍາຍມໍລະດົກວັດທະນະທຳຂອງຊາດ ໃຫ້ມີລັກສະນະຊາດ, ຮັກສາຄຸນຄ່າສີສັນວັດທະນະທຳ ທີ່ເປັນເອກະລັກຂອງຊາດ ແລະ ຂອງເຜົ່າໃຫ້ໄດ້ຮັບການອະນຸລັກຮັກສາ ສືບທອດ, ເສີມຂະຫຍາຍຢ່າງເລິກເຊິ່ງ ແລະ ກ້ວາງຂວາງ; ອຳນວຍຄວບຄຸມ ແລະ ນຳໃຊ້ກາລະໂອກາດທີ່ອຳນວຍ ເພື່ອພັດທະນາການທ່ອງທ່ຽວ ຕາມທິດອຸດສາຫະກຳປອດຄວັນ ຄຽງຄູ່ກັບການອະນຸລັກທຳມະຊາດ; ເອົາໃຈໃສ່ຕໍ່ການບູລະນະແຫລ່ງມໍລະດົກໂລກ ແລະ ມໍລະດົກແຫ່ງຊາດ ຕາມມາດຖານສາກົນ; ສູ້ຊົນໃຫ້ນັກທ່ອງທ່ຽວເຂົ້າມາປະເທດໃຫ້ໄດ້ 4 ລ້ານເທື່ອຄົນ.

+ ກະກຽມວຽກຮອບດ້ານ ໃຫ້ແກ່ການສ້າງຕັ້ງສະເຫລີມສະຫລອງ 2 ວັນປະຫວັດສາດຂອງພັກ ຂອງລັດພວກເຮົາ.

**6.4 ການນໍາພາໃນຂົງເຂດການບໍລິຫານລັດ ແລະ ວຽກງານຍຸຕິທໍາ.**

+ ຄະນະລັດຖະບານ ເອົາໃຈໃສ່ເພີ່ມການເຂັ້ມງວດ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ ໂດຍສຸມໃສ່ເຮັດທຸກສິ່ງທຸກຢ່າງ ເພື່ອເພີ່ມທະວີຄວາມສັກສິດ ແລະ ປະສິດທິຜົນ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ; ເພີ່ມທະວີຄວາມຮັບຜິດຊອບຕໍ່ການຄົ້ນຄ້ວາ ແລະ ປະກາດໃຊ້ນະໂຍບາຍຕາມທິດຮັກສາສະຖຽນລະພາບ ແລະ ຄວາມໝັ້ນທ່ຽງຂອງລະບົບການປົກຄອງ.

+ ຕັ້ງໜ້າແກ້ໄຂຂອດປະສານງານ ລະຫວ່າງ ກະຊວງ-ອົງການນໍາກັນ, ກະຊວງກັບແຂວງ ແລະ ແຂວງກັບແຂວງ ໃນການປະຕິບັດແຜນວຽກງານ ໃຫ້ກົມກຽວກວ່າເກົ່າ.

+ ເພີ່ມທະວີການສຶກສາອົບຮົມ, ຝຶກອົບຮົມພະນັກງານ-ລັດຖະກອນ ເພື່ອສ້າງສະຕິໃນການເຄົາລົບ ແລະປະຕິບັດລະບຽບກົດໝາຍ; ຕິດຕາມກວດກາການປະຕິບັດງານຂອງພະນັກງານ-ລັດຖະກອນ ຢ່າງເປັນປົກກະຕິ ແລະ ມີຄວາມເດັດຂາດເຂັ້ມງວດຕໍ່ຜູ້ທີ່ຝ່າຝືນກົດໝາຍ ແລະ ລະບຽບລັດຖະກອນ; ເອົາໃຈໃສ່ສ້າງຈັນຍາບັນ ໃຫ້ເຈົ້າຫນ້າທີ່ປົກປ້ອງກົດຫມາຍໃຫ້ດີຕື່ມ.

+ ເພີ່ມທະວີການເຜີຍແຜ່ກົດໝາຍໃຫ້ປະຊາຊົນ, ສືບຕໍ່ຫັນລົງຮາກຖານ ຕາມທິດ 3 ສ້າງ ແລະ ປະຕິບັດວຽກງານຍຸຕິທໍາຢູ່ຂັ້ນຮາກຖານ ໃຫ້ເປັນຂະບວນ ແລະ ຕໍ່ເນື່ອງ ຕາມບາດກ້າວບຸກທະລຸ ທັງ 4 ດ້ານ.

**6.5 ການນໍາພາໃນຂົງເຂດການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.**

+ ສືບຕໍ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ; ເຮັດທຸກສິ່ງທຸກຢ່າງເພື່ອຮັກສາສະຖຽນລະພາບທາງດ້ານການເມືອງ ໃຫ້ມີຄວາມໜັກແໜ້ນຂຶ້ນຕື່ມ, ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະຄວາມປອດໄພທົ່ວສັງຄົມ ເພື່ອສ້າງເງື່ອນໄຂອໍານວຍ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ລວມທັງການປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ.

+ ສຸມໃສ່ການຫັນລົງກໍ່ສ້າງຮາກຖານຢ່າງແຂງແຮງ ແລະ ສືບຕໍ່ປັບປຸງກໍາລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບຂັ້ນສູນກາງ ແລະທ້ອງຖິ່ນ ໃຫ້ໜັກແໜ້ນ ໂດຍຕິດພັນກັບການຫັນລົງກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດ.

+ ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ໃນສັງຄົມ ຕາມຄໍາສັ່ງ 27/ນຍ ຢ່າງຕັ້ງໜ້າ, ມີປະສິດທິຜົນສູງກວ່າເກົ່າ ເຮັດໃຫ້ປະກົດການຫຍໍ້ທໍ້ຫລຸດລົງເປັນກ້າວໆ; ສືບຕໍ່ປະຕິບັດບັນດາມາດຕະການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ເດັດຂາດ ແລະ ມີປະສິດທິຜົນ.

+ ສືບຕໍ່ຮ່ວມມືປັກຫລັກໝາຍຖີ່ ແລະ ແກ້ໄຂບາງຈຸດທີ່ຍັງບໍ່ທັນຈະແຈ້ງຊາຍແດນລາວ-ຫວຽດນາມ, ສົມທົບກັບກໍາປູເຈຍ ແລະໄທ ສໍາຫລວດປັກຫລັກໝາຍຊາຍແດນ ແລະ ຍົກລະດັບການພົວພັນຈາກຂັ້ນທ້ອງຖິ່ນເປັນຂັ້ນສູນກາງກັບມຽນມາແນໃສ່ແກ້ໄຂບາງຈຸດລຽບຕາມແນວຊາຍແດນ ທີ່ຍັງມີກຸ່ມຄົນບໍ່ດີສວຍໂອກາດສ້າງສະຖານະການ.

**6.6 ໃນຂົງເຂດການຕ່າງປະເທດ.**

+ ປະຕິບັດນະໂຍບາຍຕ່າງປະເທດຢ່າງກວ້າງຂວາງ ແລະ ເຄື່ອນໄຫວດ້ານການທູດຢ່າງຕັ້ງໜ້າ ເພື່ອຮັບປະກັນການສ້າງສະພາບແວດລ້ອມ ເອື້ອອໍານວຍໃຫ້ແກ່ການພັດທະນາ, ການປົກປັກຮັກສາປະເທດຊາດ ແລະ ການເຊື່ອມໂຍງກັບສາກົນ.

+ ກຽມຄວາມພ້ອມໃຫ້ການເຄື່ອນໄຫວຂອງຜູ້ນໍາພັກ-ລັດຢູ່ຕ່າງປະເທດ ແລະ ຕ້ອນຮັບຜູ້ນໍາຕ່າງປະເທດມາຢ້ຽມຢາມລາວໃນສົກປີ 2014-2015 ໃຫ້ສໍາເລັດຢ່າງຈົບງາມ; ຜັນຂະຫຍາຍຜົນຂອງການພົບປະຢ້ຽມຢາມຕ່າງປະເທດ ຂອງການນໍາພັກ-ລັດ ໃຫ້ທັນສະພາບການ ແລະ ໃຫ້ເກີດຜົນເປັນຈິງ.

+ ກະກຽມຄວາມພ້ອມທຸກດ້ານ ໃນການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ ໃນທ້າຍປີ 2015, ການເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 27, ຈັດຕັ້ງປະຕິບັດສົນທິສັນຍາຕ່າງໆ ຂອງພາກພື້ນ ແລະສາກົນ, ລວມທັງພັນທະຜູກພັນຂອງການເປັນສະມາຊິກອົງການການຄ້າໂລກ ໃຫ້ເກີດປະໂຫຍດຕໍ່ການພັດທະນາປະເທດຊາດ.

+ ເພີ່ມທະວີຕິດຕາມສະພາບການຕ່າງປະເທດ ຢ່າງໃກ້ຊິດ ພ້ອມທັງຕີລາຄາສະພາບການໃຫ້ວ່ອງໄວ ແລະ ຊັດເຈນໂດຍສະເພາະສະພາບການທີ່ອາດສົ່ງຜົນກະທົບຕໍ່ປະເທດເຮົາ ເພື່ອແກ້ໄຂບັນຫາໃຫ້ຖືກຕ້ອງສອດຄ່ອງ ກັບທິດທາງນະໂຍບາຍການຕ່າງປະເທດຂອງພັກເຮົາ ; ເອົາໃຈໃສ່ຕິດຕາມກວດກາ ການເຄື່ອນໄຫວຂອງບັນດາອົງການທີ່ບໍ່ຂຶ້ນກັບລັດຖະບານ ທີ່ເຄື່ອນໄຫວ ຢູ່ ສປປ ລາວ.

6.7 ຄະນະລັດຖະບານເພີ່ມຄວາມເອົາໃຈໃສ່ຮ່ວມກັບອົງການປົກຄອງທ້ອງຖິ່ນ ຕາມທິດ 3 ສ້າງ ດັ່ງນີ້:

+ ບັນດາກະຊວງ-ອົງການ ຢູ່ສູນກາງ ເອົາໃຈໃສ່ວຽກງານຄຸ້ມຄອງມະຫາພາກ, ແບ່ງຂັ້ນຄຸ້ມຄອງມອບວຽກ ມອບສິດ ແລະ ຄວາມຮັບຜິດຊອບການຈັດຕັ້ງປະຕິບັດຕົວຈິງ ໃຫ້ອົງການປົກຄອງທ້ອງຖິ່ນຫລາຍຂຶ້ນ ແລະ ປະສານສົມທົບກັນແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນ ໃຫ້ວ່ອງໄວ, ທັນເຫດການຕົວຈິງ.

+ ອົງການປົກຄອງແຂວງ-ນະຄອນ ເອົາໃຈໃສ່ປະຕິບັດກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ໂດຍສະເພາະມາດຕາ 13 ແລະ 14; ໃຫ້ດຳເນີນກອງປະຊຸມພາຍໃນແຂວງ ແລະ ການເຮັດວຽກຮ່ວມກັບ ສະມາຊິກສະພາເຂດທີ່ໄດ້ຖືກເລືອກຕັ້ງ ຢ່າງເປັນປະຈຳ; ເຂັ້ມງວດໃນປະຕິບັດວຽກງານທີ່ກຳນົດ ໃນດຳລັດວ່າດ້ວຍການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2014-2015 ສະບັບເລກທີ 328/ລບ ໂດຍສະເພາະທີ່ກຳນົດໃນມາດຕາ 48.

+ ໃຫ້ບັນດາແຂວງ ແລະ ນະຄອນຫລວງວຽງຈັນ ເພີ່ມທະວີຄວາມເອົາໃຈໃສ່ສ້າງຖານຜະລິດ ແລະ ສ້າງຖານລາຍຮັບເພີ່ມຂຶ້ນ ເພື່ອກ້າວໄປສູ່ການກຸ້ມຕົນເອງທາງດ້ານການເງິນ ແລະ ປະກອບສ່ວນໃຫ້ຄວາມມີສະຖຽນລະພາບຂອງເສດຖະກິດມະຫາພາກ; ເອົາໃຈໃສ່ຊີ້ນຳ ຄຸ້ມຄອງ ການລົງທຶນທັງພາກລັດ ແລະ ເອກະຊົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນກວ່າເກົ່າ.

+ ເພີ່ມທະວີການປະສານງານທາງສາຍຕັ້ງ ແລະ ສາຍຂວາງ ໃນເງື່ອນໄຂປະຕິບັດວຽກງານ 3 ສ້າງ ເພື່ອເອື້ອອຳນວຍໃຫ້ແກ່ການປະຕິບັດວຽກງານ ແລະ ແນໃສ່ຈຳກັດບັນຫາທີ່ເກີດຈາກຂອດປະສານງານທີ່ບໍ່ໂລ່ງລ່ຽນ ບໍ່ກົມກຽວກັນ.

**6.8** ໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ເອົາໃຈໃສ່ຍູ້ແຮງການສ້າງຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ເພື່ອຂໍ່ານັບຮັບຕ້ອນວັນສຳຄັນຂອງຊາດ ແລະຂອງພັກ.

**6.9 ກ່ຽວກັບກອງປະຊຸມລັດຖະບານ ກາງສົກປີ 2014-2015:** ຈະໄດ້ຈັດຂຶ້ນໃນເດືອນເມສາ 2015, ຊຶ່ງຈະໄດ້ຮ່ວມກັນປຶກສາຫາລືບາງບັນຫາສຳຄັນ ດັ່ງນີ້:

(1) ສະຫລູບຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ 6 ເດືອນຕົ້ນສົກປີ ແລະ ມາດຕະການຈັດຕັ້ງປະຕິບັດ 6 ເດືອນທ້າຍສົກປີ 2014-2015; ຮ່າງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ສົກປີ 2015-2016, ຮ່າງວິໄສທັດ ຮອດປີ 2030, ຮ່າງຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແລະ ຮ່າງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ 5 ປີ ຄັ້ງທີ VIII (ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ທະນາຄານ ແຫ່ງ ສປປ ລາວ ກະກຽມ)

(2) ການປັບປຸງນິຕິກຳທີ່ສຳຄັນ ຈຳນວນໜຶ່ງ ຄື:

+ ການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2003 (ຄະນະປັບປຸງເນື້ອໃນ "ລັດຖະທຳມະນູນ" ຂົງເຂດລັດບໍລິຫານ ກະກຽມ)

+ ການປັບປຸງກົດໝາຍ ວ່າດ້ວຍລັດຖະບານ (ຫ້ອງວ່າການລັດຖະບານ ແລະ ກະຊວງພາຍໃນ ກະກຽມ)

+ ການປັບປຸງກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ (ກະຊວງພາຍໃນ ກະກຽມ)

+ ການປັບປຸງກົດໝາຍ ວ່າດ້ວຍສະພາປະຊາຊົນທ້ອງຖິ່ນ (ກະຊວງຍຸຕິທຳ ແລະ ກະຊວງພາຍໃນ ກະກຽມ)

+ ຮ່າງນິຕິກຳ ທີ່ກຳນົດກ່ຽວກັບ ພາລະບົດບາດ ຂອງນະຄອນຫລວງວຽງຈັນ (ກະຊວງພາຍໃນ ສົມທົບກັບນະຄອນຫລວງວຽງຈັນ ກະກຽມ)

(3) ຄວາມຄືບໜ້າ ການປັກຫລັກໝາຍຊາຍແດນ ລະຫວ່າງປະເທດ (ກະຊວງການຕ່າງປະເທດ ກະກຽມ)

(4) ກວດກາປະເມີນຜົນ ກ່ຽວກັບ ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ຂອງລັດຖະບານ (ກະຊວງພາຍໃນ ກະກຽມ)

ຕາງໜ້າລັດຖະບານ,
ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ